ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 137 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 12.03.2010

# ດຳລັດ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້

### ຍຸດທະສາດການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ເລກທີ 02/99/ສພຊ, ລົງວັນທີ 03 ເມສາ 1999;
- ອີງຕາມເອກະສານສະເໜີ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ສະບັບເລກທີ /ສນຍ-ອຊສນ, ລົງວັນທີ ກຸມພາ 2010.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ສະບັບ ເດືອນ ມີນາ 2010 ຢ່າງເປັນທາງການ.

ມາດຕາ 2: ມອບໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ໃຫ້ປະກົດຜົນເປັນຈິງ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ